ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄຳມ່ວນ
ຄະນະປະຈຳ

ເລກທີ 147./ຄປຈ.ສພຂ
ຄຳມ່ວນ, ວັນທີ 20 ທັນວາ 2021

ມະຕິ
ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ,ລົງວັນທີ 10 ທັນວາ 2015.
- ອີງຕາມ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະບັບເລກທີ 21/ຄປຈ.ສພຂ, ລົງວັນທີ 10 ຕຸລາ 2016.
- ອີງຕາມ ການສະເໜີຂອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະບັບເລກທີ 24/ຄຍປປ.ສພຂ, ລົງວັນທີ 26 ສິງຫາ 2021.

ຄະນະປະຈຳສະພາປະຊາຊົນ ແຂວງຄຳມ່ວນ ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ມະຕິສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການ ແລະ ລະບອບແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຂອງ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແນ່ໃສ່ຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳ ສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ , ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນ ແຂວງ ແລະ ບັນດານິຕິກຳສຳຄັນຂອງແຂວງ ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ ໃຫ້ມີ ປະສິດທິພາບນັບມື້ສູງຂຶ້ນ ປະກອບສ່ວນເຮັດໃຫ້ວຽກງານຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນຂັ້ນແຂວງ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດຕາມ ລະດັບຄາດໝາຍ.

ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

2.1 ທີ່ຕັ້ງ.

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງສະພາປະຊາຊົນແຂວງ ປະກອບດ້ວຍສະມາຊິກສະພາປະຊາຊົນແຂວງ ທີ່ເປັນກຳມະການຂອງຄະນະກຳ

สแกนด้วย CamScanner

ມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊຶ່ງຖືກຮັບຮອງເອົາໃນກອງປະຊຸມຄັ້ງປະຖົມມະ ລຶກ ຂອງສະພາປະຊາຊົນແຂວງຄຳມ່ວນ;

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີອາຍຸການ 5 ປີ ເທົ່າກັບອາຍຸ ການ ຂອງສະພາປະຊາຊົນແຂວງ ແລະ ມີຊື່ຫຍໍ້ ເປັນຕົວອັກສອນ "ຄຍປປ" .

2.2 ພາລະບົດບາດ.

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີພາລະບົດບາດເປັນເສນາທິ ການໃຫ້ສະພາປະຊາຊົນແຂວງ ແລະ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ການຄົ້ນຄວ້າປະກອບເຫັນ ໃນການສ້າງນິຕິກຳໃຕ້ກົດໝາຍ, ຄົ້ນຄວ້າບັນຫາສຳຄັນຂອງແຂວງ, ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ມະຕິຂອງ ສະພາປະຊາຊົນແຂວງຄຳມ່ວນ, ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ໃນຂົງເຂດວຽກງານ ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ, ອົງການກວດກາລັດແຂວງ , ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ຄົ້ນຄວ້າ-ພິຈາລະນາ ແກ້ ໄຂຄຳຮ້ອງຂໍຄວາມເປັນທຳ ແລະ ວຽກງານອື່ນຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນ ແຂວງຄຳມ່ວນ.

ມາດຕາ 3 ຂອບເຂດການນຳໃຊ້

ມະຕິສະບັບນີ້ ນຳໃຊ້ສະເພາະຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງຄຳມ່ວນ.

ໝວດທີ 2
ສິດ ແລະ ໜ້າທີ່

ມາດຕາ 4 ສິດ ແລະ ໜ້າທີ່

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ໃນການ ປະຕິບັດ 3 ພາລະບົດບາດດັ່ງນີ້:

4.1 ດ້ານນິຕິກຳ.

1. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງທິດທາງແຜນການ 5 ປີ ແລະ ບົດລາຍງານປະຈຳສົກປີຂອງ ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລ້ວລາຍງານຕໍ່ຄະນະປະຈຳສະພາ ປະຊາຊົນແຂວງຄຳມ່ວນ ພິຈາລະນາກ່ອນຈະນຳສະເໜີກອງປະຊຸມສະພາປະຊາຊົນແຂວງຄຳມ່ວນ ພິຈາລະນາຮັບຮອງເອົາ;
2. ປະສານສົມທົບກັບບັນດາຄະນະກຳມະການສະພາປະຊາຊົນແຂວງຄຳມ່ວນ, ກຳລັງປະກອບອາວຸດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາ ປະຊາຊົນແຂວງ, ໃນຂົງເຂດ ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳ ແຂວງ, ອົງການກວດກາລັດແຂວງ, ກອງບັນຊາການທະຫານແຂວງ, ກອງບັນຊາການປ້ອງກັນຄວາມ ສະຫງົບແຂວງ ເພື່ອສະເໜີຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ພິຈາລະນາ;

สแกนด้วย CamScanner

3. ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ, ຮ່າງນິຕິກຳໃຕ້ກົດໝາຍ ຈາກພາກສ່ວນທີ່ກ່ຽວຂ້ອງ ສະເໜີມາຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ຕາມການມອບໝາຍຂອງຄະນະປະຈຳ ສະພາປະຊາຊົນແຂວງຄຳມ່ວນ;
4. ປະສານສົມທົບກັບບັນດາຄະນະກຳມະການ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອນຳເອົາບັນດາກົດໝາຍ ແລະ ນິຕິກຳອື່ນໆ ໄປໂຄສະນາເຜີຍແຜ່ຢ່າງກວ້າງຂວາງ;

4.2 ຕົ້ນຕີບັນຫາສຳຄັນພື້ນຖານຂອງແຂວງຄຳມ່ວນ:

1. ເຂົ້າຮ່ວມຄົ້ນຄວ້າອະໄພຍະໂທດ ກັບອົງການທີ່ກ່ຽວຂ້ອງຂອງແຂວງ ຕາມທີ່ໄດ້ກຳນົດໄວ້ໃນມະຕິຂອງ ຄະນະປະຈຳສະພາແຫ່ງຊາດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງຂອງແຂວງ; ເຂົ້າຮ່ວມກັບພາກສ່ວນທີ່ ກ່ຽວຂ້ອງ ເພື່ອຄົ້ນຄວ້າປະກອບຄຳເຫັນໃສ່ແຜນພັດທະນາ ເສດຖະກິດ-ສັງຄົມຂອງແຂວງ, ແຜນ ງົບປະມານແຫ່ງລັດຂອງແຂວງ ຕາມຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າການສະເໜີ ແຕ່ງຕັ້ງບຸກຄະລາກອນ ຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນ ແຂວງ, ເຂດ ເພື່ອສະເໜີຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ພິຈາລະນາ;
3. ຮັບ ແລະ ພິຈາລະນາຄຳສະເໜີຂອງພະແນກການຕ່າງໆ ກ່ຽວກັບວຽກງານຍຸຕິທຳ ແລະ ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຄົ້ນຄວ້າ ການສະເໜີຂອງເຈົ້າແຂວງ ກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກ ເມືອງ, ເທດສະບານ ແລະ ການກຳນົດເຂດແດນຂອງເມືອງ: ເທດສະບານ ເພື່ອສະເໜີຄະນະປະຈຳສະພາປະຊາຊົນແຂວງຄຳ ມ່ວນ ພິຈາລະນາ;
5. ຄົ້ນຄວ້າຄຳສະເໜີຂອງປະຊາຊົນ ກ່ຽວກັບການບໍ່ໄວ້ວາງໃຈຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນ ແຂວງຄຳມ່ວນເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ ແລ້ວສະເໜີຄະນະປະຈຳສະພາປະຊາຊົນ ແຂວງ ພິຈາລະນາ.

4.3 ຕິດຕາມ, ກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ:

1. ສ້າງແຜນການຕິດຕາມ, ກວດກາແຕ່ລະໄລຍະຕາມພາລະບົດບາດຄວາມຮັບຜິດຊອບຂອງຕົນ ເພື່ອສະ ເໜີຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາຕົກລົງ;
2. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວ, ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການອອກ ນິຕິກຳ, ການແກ້ໄຂຄຳຮ້ອງທຸກ ຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ, ຫ້ອງການຈັດຕັ້ງ ປະຕິບັດຄຳຕັດສິນຂອງສານ, ອົງການບໍລິຫານລັດຂັ້ນທ້ອງຖິ່ນ ແລະ ກຳລັງປະກອບອາວຸດ;
3. ຕິດຕາມ, ກວດກາການຈັດຕັ້ງປະຕິບັດ ມະຕິຂອງສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາ ແຫ່ງຊາດ, ມະຕິຂອງສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນ ແຂວງຄຳມ່ວນ, ນິຕິກຳຂອງອົງການປົກຄອງແຂວງ;
4. ຕິດຕາມ, ກວດກາການດຳເນີນຄະດີຂອງ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ຫຼື ພາກສ່ວນທີ່ກ່ຽວຂ້ອງ;
5. ຕິດຕາມ, ກວດກາການຄົ້ນຄວ້າ-ພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຂອງຄະນະ ປະສານງານປົກປ້ອງລະບຽບກົດໝາຍ ພາຍໃນແຂວງ ແລະ 10 ຕິວເມືອງ ຂອງແຂວງ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ກຳໜົດໄວ້ໃນກົດໝາຍ;
6. ເກັບກຳ, ວິເຄາະຂໍ້ມູນ-ຂ່າວສານ ກ່ຽວກັບບັນຫາໃດໜຶ່ງ ຂອງພາກສ່ວນທີ່ຕົນຮັບຜິດຊອບ ເພື່ອສະເໜີ ໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງ ແລະ ຕິດຕາມ, ກວດກາ ຜົນການແກ້ໄຂບັນຫາດັ່ງກ່າວ:

สแกนด้วย CamScanner

ຂະແໜງການທີ່ກ່ຽວຂ້ອງຕ້ອງສະໜອງຂໍ້ມູນ-ຂ່າວສານໃຫ້ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງຄົບຖ້ວນທັນເວລາ;

7. ຄົ້ນຄວ້າ ກ່ຽວກັບການໂຈະ, ການຈັດຕັ້ງປະຕິບັດ, ການປັບປຸງ, ການຍົກເລີກ ຫຼື ການລົບລ້າງນິຕິກຳ ຂອງອົງການລັດຂັ້ນແຂວງ ແລ້ວສະເໜີຕໍ່ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາ.

ມາດຕາ 5 ສິດ ແລະ ໜ້າທີ່ອື່ນ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວວຽກງານຂອງຕົນເປັນແຕ່ລະໄລຍະ;
2. ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ;
3. ດຳເນີນກອງປະຊຸມຄະນະກຳມະການ, ກອງປະຊຸມຄົບຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກອງປະຊຸມອື່ນໆຮ່ວມກັບອົງການທີ່ກ່ຽວຂ້ອງ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ;
4. ພົວພັນ, ປະສານສົມທົບກັບການຈັດຕັ້ງ ແລະ ບຸກຄົນທີ່ເຫັນວ່າມີຄວາມຈຳເປັນ;
5. ຮັບ, ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງບຸກຄົນ ແລະ ການຈັດຕັ້ງ, ໃຫ້ຄຳເຫັນແນະນຳທາງດ້ານກົດໝາຍໃຫ້ແກ່ປະຊາຊົນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ສະຫຼຸບ, ຖອນຖອດບົດຮຽນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຄະນະກຳມະການຕົນໃຫ້ຄະນະປະຈຳສະພາປະຊາຊົນແຂວງຢ່າງເປັນປົກກະຕິ;
7. ພົວພັນຮ່ວມມືວຽກງານຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບອົງການຈັດຕັ້ງຕ່າງປະເທດ, ໃນພາກພື້ນສາກົນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ໂດຍສະເພາະຕໍ່ປະເທດເພື່ອນມິດຍຸດທະສາດ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ.

ໝວດທີ 3
ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

ມາດຕາ 6 ໂຄງປະກອບການຈັດຕັ້ງ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບປະກອບມີສອງຂະແໜງການຊ່ວຍວຽກຄື:

- ຂະແໜງ ນິຕິກຳ ແລະ ຍຸຕິທຳ;
- ຂະແໜງ ປກຊ-ປກສ.

ມາດຕາ 7 ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີດັ່ງນີ້:

- ປະທານ;
- ຮອງປະທານ;
- ກຳມະການສັງກັດຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຊິ່ງປະຈຳການຢູ່ບັນດາແໜງການ ແລະ ບັນດາເຂດເລືອກຕັ້ງເມືອງ;

สแกนด้วย CamScanner

- ສິດ ແລະ ໜ້າທີ່ຂອງຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ວິຊາຊ່ວຍວຽກ ແມ່ນ ໄດ້ກຳນົດໄວ້ໃນລະບຽບສະເພາະ.

ມາດຕາ 8 ສິດ ແລະ ໜ້າທີ່ຂອງປະທານ

ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳວຽກງານລວມ ແລະ ລົງເລິກວຽກງານຄຳຮ້ອງທຸກຂອງປະຊາຊົນ, ການເມືອງ-ແນວຄິດ ແລະ ການຈັດຕັ້ງຂອງຄະນະກຳມະການ;
2. ຊີ້ນຳ ການສ້າງແຜນການເຄື່ອນໄຫວວຽກງານຂອງຄະນະກຳການ ໃນແຕ່ລະໄລຍະ ແລະ ແບ່ງຄວາມຮັບຜິດຊອບໃຫ້ກຳມະການ ຂອງຄະນະກຳມະການ ເພື່ອຈັດຕັ້ງປະຕິບັດ;
3. ຊີ້ນຳການສ້າງແຜນການສ້າງ ແລະ ປັບປຸງນິຕິກຳ ຕາມແຜນການຂອງສະພາປະຊາຊົນແຂວງຄຳມ່ວນ;
4. ຊີ້ນຳ, ຕິດຕາມ ແລະ ຊຸກຍູ້ການເຄື່ອນໄຫວວຽກງານຂອງກຳມະການ;
5. ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ຢ່າງເປັນປົກກະຕິ;
6. ຊີ້ນຳການຄົ້ນຄ້ວາ, ພິຈາລະນາບັນຫາຕ່າງໆ ທີ່ພົວພັນເຖິງວຽກງານນິຕິກຳຂັ້ນທ້ອງຖິ່ນ;
7. ຊີ້ນຳການຈັດຕັ້ງການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານຕ່າງໆ ແລະ ສະໜອງຂໍ້ມູນ-ຂ່າວສານ ອັນຈຳເປັນໃຫ້ແກ່ກຳມະການ ແລະ ພະນັກງານ-ລັດຖະກອນ ຂອງຄະນະກຳມະການ;
8. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມຄົບຄະນະ ຂອງຄະນະກຳມະການ ແລະ ກອງປະຊຸມຄະນະກຳມະການ;
9. ຊີ້ນຳການຄົ້ນຄວ້າກ່ຽວກັບການອອກຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຂອງຄະນະກຳມະການ;
10. ມີຄຳເຫັນ, ຕົກລົງບັນຫາໃດໜຶ່ງ ແລະ ເຊັນເອກະສານຕ່າງໆ ຂອງຄະນະກຳມະການ ຕາມຄວາມຮັບຜິດຊອບຂອງຕົນ;
11. ພົວພັນໂດຍກົງກັບບັນດາປະທານຄະນະກຳມະການອື່ນ ແລະ ເລຂາທິການສະພາປະຊາຊົນແຂວງ ກ່ຽວກັບວຽກງານສຳຄັນ ເຊັ່ນ: ວຽກງານດ້ານນິຕິກຳ, ກົງຈັກການຈັດຕັ້ງ-ພະນັກງານ ແລະ ອື່ນໆ;
12. ພົວພັນ, ຮ່ວມມືວຽກງານທາງດ້ານກົດໝາຍ ແລະ ວຽກງານຍຸຕິທຳ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ;
13. ລາຍງານການເຄື່ອນໄຫວວຽກງານ ຂອງຄະນະກຳມະການ ແລະ ສະເໜີບັນຫາສຳຄັນ ແລະ ຮີບດ່ວນ ຕໍ່ປະທານ, ຮອງປະທານ ຄະນະປະຈຳສະພາປະຊາຊົນແຂວງ ຢ່າງເປັນປົກກະຕິ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຕາມການມອບໝາຍ ຂອງປະທານ ສະພາປະຊາຊົນແຂວງຄຳມ່ວນ ຫຼື ຮອງປະທານສະພາປະຊາຊົນແຂວງຄຳມ່ວນ.

ມາດຕາ 9 ສິດ ແລະ ໜ້າທີ່ ຮອງປະທານ

ຮອງປະທານ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີສິດ ແລະ ໜ້າທີ່ ດັ່ງນີ້:

1. ລົງເລິກວຽກງານຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ຂອງນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ແລະ ປະຊາຊົນບັນດາເຜົ່າທີ່ມີການພົວພັນເຖິງກຳລັງປະກອບອາວຸດ;
2. ລົງເລິກວຽກງານສ້າງ ແລະ ປັບປຸງນິຕິກຳຂົງເຂດກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ໂຄສະນາ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນຸນ ແລະ ກົດໝາຍ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

สแกนด้วย CamScanner

4. ຄົ້ນຄ້ວາ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂັ້ນແຂວງ ທີ່ກ່ຽວຂ້ອງກັບ ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ມີຄຳເຫັນ, ຕີລາຄາບັນຫາໃດໜຶ່ງ ແລະ ເຊັນເອກະສານຕ່າງໆຕາມການມອບໝາຍຂອງປະທານຄະນະ ກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງປະທານຄະນະກຳມະການ ຫຼື ຄະນະປະຈຳ ສະພາປະຊາຊົນແຂວງຄຳມ່ວນ;

ມາດຕາ 10 ສິດ ແລະ ໜ້າທີ່ຂອງກຳມະການ

ກຳມະການ ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍເນື້ອໃນນິຕິກຳ ແລະ ແຜນການ ການເຄື່ອນໄຫວວຽກງານຂອງຄະນະກຳມະການ ໃຫ້ ເປັນແຜນການເຄື່ອນໄຫວວຽກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນ;
2. ປະກອບຄຳຄິດຄຳເຫັນໃສ່ຮ່າງນິຕິກຳ ແລະ ແຜນການການເຄື່ອນໄຫວວຽກງານຂອງຄະນະກຳມະການ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ສະພາບຄວາມເປັນຈິງ ຂອງອົງການບໍລິຫານລັດຂັ້ນ ທ້ອງຖິ່ນ;
3. ຊັກຖາມພະແນກການທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນ ໃນຂອບ ເຂດຄວາມຮັບຜິດຊອບຂອງຕົນເອງ;
4. ພົວພັນພົບປະປະຊາຊົນ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍ ແກ່ການຈັດຕັ້ງ ແລະ ປະຊາຊົນ ລວມທັງຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມກອງປະຊຸມຄົບຄະນະຂອງຄະນະກຳມະການ ຕາມການຮຽກໂຮມຂອງປະທານ, ສະເໜີ ບັນຫາ, ປະກອບຄຳເຫັນ ແລະ ລົງຄະແນນສຽງຮັບຮອງ ບັນຫາທີ່ນຳມາພິຈາລະນາໃນກອງປະຊຸມ ດັ່ງກ່າວ. ໃນກໍລະນີທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມ ຕາມການຮຽກໂຮມໄດ້ ກຳມະການຜູ້ນັ້ນ ຕ້ອງ ແຈ້ງເປັນລາຍລັກອັກສອນ ໃຫ້ປະທານ ກ່ອນມື້ເປີດກອງປະຊຸມ;
6. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງກຳມະການ ໃນ 1 ເດືອນ, 3ເດືອນ, 6ເດືອນ ແລະ 1 ປີ ຕໍ່ປະທານຄະນະກຳມະການ ຍຸຕິທຳ ແລະ ປກຊ-ປກສ. ໃນກໍລະນີທີ່ມີສະພາບພື້ນເດັ່ນ ຕ້ອງໄດ້ ລາຍງານຢ່າງຮີບດ່ວນ ໃຫ້ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ພິຈາລະນາ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ;
8. ເກັບກຳສະພາບ ແລະ ບັນຫາປະກົດການຫຍໍ້ທໍ້ຕ່າງໆພາຍໃນແຂວງ ແລະ ຂົງເຂດທີ່ຕົນເອງ ຮັບຜິດຊອບ ແລ້ວລາຍງານໃຫ້ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ.

ມາດຕາ 11 ສິດ ແລະ ໜ້າທີ່ຂອງຂະແໜງຊ່ວຍວຽກ

ສິດ ແລະໜ້າທີ່ຂອງຂະແໜງຊ່ວຍວຽກ ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ຕາມການ ມອບໝາຍຂອງປະທານ ຫຼື ຮອງປະທານ ຄະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

สแกนด้วย CamScanner

ໝວດທີ 4
ກອງປະຊຸມຂອງຄະນະກຳມະການ

ມາດຕາ 12 ປະເພດກອງປະຊຸມ

ກອງປະຊຸມ ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີ ສອງ ປະເພດດັ່ງນີ້:

1. ກອງປະຊຸມຄະນະກຳມະການ;
2. ກອງປະຊຸມຄົບຄະນະ ຂອງຄະນະກຳມະການ.

ມາດຕາ 13 ກອງປະຊຸມຂອງຄະນະກຳມະການ

ກອງປະຊຸມຂອງຄະນະກຳມະການເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານຄະນະກຳມະການ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

ກອງປະຊຸມຄະນະກຳມະການ ມີເນື້ອໃນດັ່ງນີ້:

1. ຮັບຟັງການລາຍງານ ການເຄື່ອນໄຫວວຽກງານປະຈຳເດືອນ ແລະ ແຜນການເຄື່ອນໄຫວ ວຽກງານໃນເດືອນຕໍ່ໜ້າຢ່າງມີເນື້ອໃນຈຸດສຸມ, ຜົນງານທາງດ້ານວິຊາການ;
2. ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນໃສ່ຮ່າງນິຕິກຳຕ່າງໆ ຂອງບັນດາຄະນະກຳມະການ, ພະແນກການ ຂອງແຂວງ ແລະ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ພິຈາລະນາການຄົ້ນຄ້ວາຄຳຮ້ອງຂໍຄວາມເປັນທຳທີ່ມີຄວາມຫຍຸ້ງຍາກ ແລະ ສຳຄັນ ເພື່ອລາຍງານ ຕໍ່ຄະນະປະຈຳສະພາປະຊາຊົນແຂວງ ພິຈາລະນາ ຫຼື ຕົກລົງ;
4. ຄົ້ນຄວ້າ, ວິໃຈ ບົດລາຍງານຂອງກຳມະການທີ່ສັງກັດຢູ່ຄະນະກຳມະການຂັ້ນແຂວງ ແລະ ປະຈຳຢູ່ເຂດເລືອກຕັ້ງເມືອງ ທີ່ພົວພັນເຖິງສະພາບການທີ່ພົ້ນເດັ່ນ ແລະ ສະເໜີວິທີແກ້ໄຂ ເພື່ອລາຍງານຕໍ່ຄະນະປະຈຳສະພາປະຊາຊົນແຂວງພິຈາລະນາ ແລະ ໃຫ້ທິດຊີ້ນຳ;
5. ກະກຽມບັນດາເນື້ອໃນກອງປະຊຸມຄົບຄະນະຂອງຕົນ;
6. ປຶກສາຫາລື ກ່ຽວກັບການປະຕິບັດວຽກງານອື່ນ ທີ່ຈຳເປັນຢູ່ໃນຂົງເຂດທີ່ຄະນະກຳມະການ ຮັບຜິດຊອບ.

ມາດຕາ 14 ກອງປະຊຸມຄົບຄະນະຂອງຄະນະກຳມະການ

ກອງປະຊຸມຄົບຄະນະເປີດຂຶ້ນຢ່າງໜ້ອຍໜຶ່ງເທື່ອຕໍ່ປີ ກ່ອນກອງປະຊຸມສະໄໝສາມັນ ຂອງສະພາປະຊາຊົນແຂວງ ໂດຍແມ່ນປະທານຄະນະກຳມະການ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ ຕາມການເຫັນດີຂອງຄະນະປະຈຳສະພາປະຊາຊົນແຂວງ.

ກອງປະຊຸມຄົບຄະນະ ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີເນື້ອໃນສຳຄັນດັ່ງນີ້:

1. ພິຈາລະນາ ບົດລາຍງານການເຄື່ອນໄຫວວຽກງານໃນໜຶ່ງປີຜ່ານມາ ແລະ ທິດທາງແຜນການ ເຄື່ອນໄຫວໃນປີຕໍ່ໜ້າ;
2. ຄົ້ນຄ້ວາ, ປະກອບຄຳເຫັນໃສ່ຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນ ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
3. ຮັບຟັງການລາຍງານ, ການປະກອບຄຳຄິດຄຳເຫັນ, ຄຳສະເໜີ, ຄວາມສົນໃຈ ຂອງກຳມະການ, ຂອງພະແນກການ ທີ່ກ່ຽວຂ້ອງ ກັບຂົງເຂດຍຸຕິທຳ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຄົ້ນຄວ້າຄຳສະເໜີ, ຄຳຮ້ອງຂໍ, ຄວາມສົນໃຈຂອງປະຊາຊົນ ເພື່ອເປັນບ່ອນອີງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງຕັ້ງຂໍ້ຊັກຖາມຕໍ່ ອົງການປົກຄອງແຂວງ, ອົງການສືບສວນ-ສອບສວນຂອງເຈົ້າ

สแกนด้วย CamScanner

ໜ້າທີ່ຕໍ່າຫຼວດ, ອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ, ພະແນກຍຸຕິທຳ ແຂວງ, ອົງການກວດກາລັດແຂວງ ໃນກອງປະຊຸມສະພາປະຊາຊົນແຂວງຄຳມ່ວນ;

5. ຕີລາຄາປະເມີນຜົນການປະຕິບັດວຽກງານຂອງຄະນະກຳມະການ ແລະ ວຽກງານຄົງຄ້າງ, ຈຸດສຸມທີ່ຈຳເປັນຕ້ອງໄດ້ແກ້ໄຂ;
6. ຜ່ານມະຕິກອງປະຊຸມຄົບຄະນະ ຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ມະຕິຂອງກອງປະຊຸມຄົບຄະນະຈະໃຊ້ໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນກຳມະການທີ່ເຂົ້າຮ່ວມກອງປະຊຸມ.

ບຸກຄົນອື່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມຄົບຄະນະຂອງຄະນະກຳມະການ ມີສິດປະກອບຄຳຄິດຄຳເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

ກອງປະຊຸມຄົບຄະນະຂອງຄະນະກຳມະການຕ້ອງເຮັດບົດບັນທຶກ ໂດຍມີການເຊັນຂອງຜູ້ບັນທຶກ ແລະ ການເຊັນຢັ້ງຢືນ ຂອງປະທານກອງປະຊຸມ ແລ້ວລາຍງານໃຫ້ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ເພື່ອຊາບ.

ໝວດທີ 5
ຫຼັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 15 ຫຼັກການ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງສະພາປະຊາຊົນແຂວງຄຳມ່ວນ ຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການລວມສູນປະຊາທິປະໄຕ, ນິຕິທຳ ແລະ ໂປ່ງໃສ ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບ ຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບ ຂອງບຸກຄົນ, ເອົາກອງປະຊຸມເປັນບ່ອນປຶກສາຫາລືບັນຫາ ແລະ ຕົກລົງ ຕາມສຽງສ່ວນຫຼາຍ.

ມາດຕາ 16 ແບບແຜນວິທີເຮັດວຽກ

ປະທານ, ຮອງປະທານ, ກຳມະການສັງກັດ ແລະ ຂະແໜງການທີ່ຂຶ້ນກັບຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ດຳເນີນດ້ວຍລະບອບປະຊຸມ ຫັນແຜນການຂອງສະພາປະຊາຊົນແຂວງຄຳມ່ວນ ມາຜັນຂະຫຍາຍເປັນແຜນການ, ແຜນງານ, ໂຄງການ, ກິດຈະກຳ ໂດຍມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ສູ້ຊົນປະຕິບັດໃຫ້ສຳເລັດ, ມີການກວດກາ, ສະຫຼຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບສ່ອງແສງລາຍງານ, ຂໍຄວາມເຫັນ, ຂໍທິດຊີ້ນຳຈາກຄະນະນຳ ຢ່າງເປັນປົກກະຕິ, ປະສານສົມທົບກັບການຈັດຕັ້ງພາຍໃນສະພາປະຊາຊົນແຂວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງເພື່ອໃຫ້ທັນກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 17 ການປະສານງານ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະສານງານກັບບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ການຈັດຕັ້ງອື່ນພາຍໃນສະພາປະຊາຊົນຂັ້ນແຂວງຄຳມ່ວນ ໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຫຼື ຕາມການມອບໝາຍ ຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ;

สแกนด้วย CamScanner

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະສານງານກັບພະແນກການທີ່ກ່ຽວຂ້ອງ, ອົງການທຽບເທົ່າ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ພະແນກຍຸຕິທຳ ແລະ ອົງການກວດກາລັດ (ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ) ແລະ 10 ຕິວເມືອງເພື່ອແລກປ່ຽນຂໍ້ມູນ, ຂ່າວສານ ແລະ ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ຫຼື ຕາມການມອບໝາຍຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ.

ໝວດທີ 6
ບົດບັນຍັດສຸດທ້າຍ

ມາດຕາ 18 ງົບປະມານ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີງົບປະມານຮັບໃຊ້ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ບັນດາແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳຂອງຕົນ ຊຶ່ງນອນຢູ່ໃນງົບປະມານຂອງສະພາປະຊາຊົນແຂວງຄຳມ່ວນໄດ້ຈັດແບ່ງໃຫ້.

ມາດຕາ 19 ຕາປະທັບ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຕາປະທັບສະເພາະຂອງຕົນ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຂອບວົງມົນເບື້ອງເທິງຂຽນວ່າ: “ສະພາປະຊາຊົນແຂວງຄຳມ່ວນ ” , ເບື້ອງລຸ່ມຂຽນວ່າ: “ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ” ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

ມາດຕາ 20 ການຈັດຕັ້ງປະຕິບັດ

ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະກຳມະການອື່ນ, ຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ, ກົງຈັກທີ່ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນສ້າງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ມາດຕາ 21 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນມະຕິສະບັບເລກທີ 21/ຄປຈ.ສພຂ, ລົງວັນທີ 10 ຕຸລາ 2016.

ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ
ປະທານ

ບຸນມີ ພິມມະສອນ

ສແກນດ້ວຍ CamScanner